ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 520 715

ເລກທີ: 054 /ລອທ

ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2019

ມະຕິກອງປະຊຸມ
ສະພາບໍລິຫານຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນຄັ້ງທີ 3 ປະຈຳປີ 2019

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 03 ປະຈຳປີ 2019

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28/1/2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 03 ປະຈຳປີ 2019 ຊຶ່ງຈັດຂຶ້ນໃນ ວັນທີ 22 ເມສາ 2019 ເວລາ 10:00 ໂມງຢູ່ທີ່ຫ້ອງປະຊຸມສຳນັກງານໃຫຍ່ ຂອງບໍລິສັດ ຕັ້ງຢູ່ທີ່ບ້ານວັດໄຕນ້ອຍທົ່ງ, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ ສປປ. ລາວ ໂດຍມີມະຕິລາຍລະອຽດດັ່ງລຸ່ມນີ້:

1. ກອງປະຊຸມມີມະຕິເຫັນດີເປັນເອກະພາບຮັບຮອງເອົາບົດລາຍງານກອງປະຊຸມສະພາບໍລິຫານ ຄັ້ງທີ 02 ປະຈຳປີ 2019.
2. ກອງປະຊຸມມີມະຕິເຫັນດີເປັນເອກະພາບຮັບຮອງເອົາບົດລາຍງານກອງປະຊຸມຄະນະກຳມະການກວດສອບ ຄັ້ງທີ 01 ປະຈຳປີ 2019.
3. ກອງປະຊຸມມີມະຕິເຫັນດີເປັນເອກະພາບໃຫ້ນຳຜົນກຳໄລ (ຂາດທຶນ) ຈາກການດຳເນີນງານ ປະຈຳປີ 2018 ຫລັງຈາກຫັກສຳຮອງຕາມກົດໝາຍແລ້ວ ມາໃຊ້ເປັນເງິນທຶນໝຸນວຽນສຳຫລັບການດຳເນີນງານໃນ ປີ 2019 ໂດຍບໍ່ຈ່າຍເງິນປັນຜົນ ປະຈຳປີ 2018.
4. ກອງປະຊຸມມີມະຕິເຫັນດີເປັນເອກະພາບຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019 ແລະ ນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2019 ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ເພື່ອພິຈາລະນາ ແລະ ຮັບຮອງຕໍ່ໄປ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 520 715

5. ກອງປະຊຸມມີມະຕິເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ(ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Company Limited) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2019 ໂດຍມີຄ່າບໍລິການກວດສອບເປັນເງິນຈຳນວນ ບໍ່ກາຍ 43.000 ໂດລາສະຫະລັດ.
6. ກຳນົດວາລະຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:
   - ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018
   - ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນ ປະຈຳປີ 2018
   - ວາລະທີ 3: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019
   - ວາລະທີ 4: ພິຈາລະນາ ແລະ ຮັບຮອງບໍ່ໃຫ້ມີການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ ປະຈຳປີ 2018
   - ວາລະທີ 5: ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2019
   - ວາລະທີ 6: ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານ.
   - ວາລະທີ 7: ເລື່ອງອື່ນໆ (ຖ້າມີ)

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຮັບຊາບ

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ປະທານກອງປະຊຸມ

ທ່ານ ອະພິສິດ ລຸຈິກຽດກຳຈອນ